ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------***---------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1514 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 30 JUL 2012

# ບົດແນະນຳ

ເຖິງ: ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຄຸ້ມຄອງລາຄາເຂົ້າ ຢູ່ພາຍໃນແຂວງ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 522/ນຍ, ລົງວັນທີ 23/12/2012, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ບົດແນະນຳ, ສະບັບເລກທີ 1405/ອຄ.ຄພນ, ລົງວັນທີ 11/07/2010, ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດ 474/ນຍ, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າ ໃນທົ່ວປະເທດ ເຂົ້າສູ່ລະບົບ ແລະ ລະບຽບການທີ່ລັດວາງອອກ, ໂດຍສະເພາະແມ່ນສິນຄ້າທີ່ລັດຄວບຄຸມເວົ້າລວມ, ເວົ້າສະເພາະແມ່ນເຂົ້າ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ເພື່ອເຮັດໃຫ້ທຸກພາກສ່ວນ ໄດ້ມີສ່ວນຮ່ວມໃນການປະຕິບັດບັນດານິຕິກຳທີ່ລັດວາງອອກ ດ້ວຍຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ບົນພື້ນຖານການແຂ່ງຂັນການຄ້າທີ່ເປັນທຳ ແລະ ສ້າງຄວາມເຂັ້ມແຂງຢູ່ພາຍໃນ ໃນແຕ່ລະດ້ານ ແລະ ໃຫ້ສາມາດແຂ່ງຂັນໄດ້ກັບພາຍນອກ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳ ດັ່ງນີ້:

1. ໃຫ້ຄຸ້ມຄອງສິນຄ້າສະບຽງອາຫານ ປະເພດເຂົ້າກິນ ເຊັ່ນ: ເຂົ້າເປືອກໜຽວ, ເຂົ້າເປືອກຈ້າວ, ເຂົ້າສານໜຽວ (ປະເພດ 1 ແລະ 2), ເຂົ້າສານຈ້າວ (ປະເພດ 1 ແລະ 2) ຕາມກົນໄກເສດຖະກິດຕະຫຼາດແຕ່ ລະໄລຍະ ແລະ ການຄຸ້ມຄອງດັດສົມ ທັງຂອດເກັບຊື້ ແລະ ຂອດຂາຍພ້ອມກັນ, ເປັນຕົ້ນແມ່ນຂອດຕົ້ນທຶນການຜະລິດເຂົ້າ ຈົນຮອດ ຂອດຂາຍຍ່ອຍໃນທ້ອງຕະຫຼາດ ບົນພື້ນຖານໂຄງປະກອບລາຄາ ທີ່ຊັດເຈນ;
2. ໃຫ້ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຂະແໜງກະສິກຳ ແລະ ປ່າໄມ້ ເພື່ອພ້ອມກັນຄົ້ນຄວ້າ ຂໍທິດຊີ້ນຳຈາກເຈົ້າແຂວງ ໃນການຕິດຕາມ, ກວດກາ ແລະ ເກັບກຳຂໍ້ມູນທາງດ້ານລາຄາ ແລະ ອື່ນໆ ໃນແຕ່ລະຂອດ (ຂອດຜະລິດ ແລະ ຂາຍຍ່ອຍ);
3. ເພື່ອຮັບປະກັນໃຫ້ລາຄາເຂົ້າ ມີລາຄາໄປຕາມກົນໄກຕະຫຼາດ ແລະ ສົມເຫດສົມຜົນ, ການກຳນົດລາຄາໃນແຕ່ລະຄັ້ງ ຢູ່ແຕ່ລະຂອດ (ຜະລິດ ແລະ ຂາຍ) ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ເປັນໃຈກາງໃນການຄິດໄລ່ ໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມເງື່ອນໄຂ ແລະ

ໂຄງປະກອບລາຄາເຂົ້າຂອງແຕ່ລະຂອດຢ່າງລະອຽດ ແລະ ຊັດເຈນ, ການກຳນົດແມ່ນໃຫ້ອີງໃສ່ສະພາບຂໍ້ມູນຕົວຈິງຂອງແຕ່ລະແຂວງເປັນພື້ນຖານໃນການຄິດໄລ່ (ມີຮ່າງໂຄງປະກອບຄິດໄລ່ລາ ຄາຕົວແບບຄັດຕິດມາພ້ອມ);

4. ໃຫ້ຄິດໄລ່ລາຄາເຂົ້າດັ່ງກ່າວຢ່າງເປັນລະບົບ, ການກຳນົດລາຄາໃນແຕ່ລະຂອດ ຕ້ອງອີງຕາມຂໍ້ມູນ ຕົວຈິງ, ການຄິດໄລ່ໃຫ້ປະຕິບັດຕາມເນື້ອໃນທີ່ຢູ່ໃນໂຄງປະກອບລາຄາເຂົ້າ ແລະ ໃຫ້ອີງໃສ່ສະພາບການຕົວຈິງທີ່ສົມເຫດສົມຜົນ;

5. ກຳນົດອັດຕາກຳໄລ ໂດຍພື້ນຖານ ດັ່ງນີ້:

- ໃນຂອດຕົ້ນທຶນການຜະລິດຂອງຊາວນາ: ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງ (ກະສິກຳ-ປ່າໄມ້) ຄົ້ນຄວ້າພິຈາລະນາ ໃນການກຳນົດອັດຕາກຳໄລ ໃຫ້ສົມເຫດສົມຜົນ, ບົນພື້ນຖານສົ່ງເສີມຊາວນາ;

- ລາຄາຂາຍຍົກຢູ່ຂອດຂອງໂຮງສີ: ໃຫ້ກຳນົດກຳໄລ 5% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາເຂົ້າ ເພື່ອສົ່ງໃຫ້ພໍ່ຄ້າຂາຍຍ່ອຍຢູ່ຕະຫຼາດ;

- ລາຄາຂາຍຍ່ອຍຢູ່ຂອດຕະຫຼາດ: ໃຫ້ກຳນົດກຳໄລ 3% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາເຂົ້າ ພ້ອມທີ່ຈະຂາຍໃຫ້ຜູ້ບໍລິໂພກ;

ນີ້ແມ່ນກຳນົດເປັນພື້ນຖານໃນເບື້ອງຕົ້ນ, ແຕ່ລາຍລະອຽດວ່າສົມເຫດສົມຜົນແນວໃດ ໂດຍອີງໃສສະພາບເງື່ອນໄຂຂອງແຕ່ລະທ້ອງຖິ່ນ ແມ່ນມອບໃຫ້ທ້ອງຖິ່ນເປັນເຈົ້າການຄົ້ນຄວ້າ ແລະ ພິຈາລະນາ.

6. ເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການ ໂດຍສະເພາະແມ່ນຫົວໜ່ວຍທີ່ເຮັດທຸລະກິດເຂົ້າ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນຂອດທີ່ຕົນຮັບຜິດຊອບຢ່າງເປັນເຈົ້າການ. ກ່ອນຈະຂຶ້ນ ຫຼື ລົງລາຄາໃນແຕ່ລະຄັ້ງ, ຜູ້ປະກອບການ (ສະມາຄົມ ຫຼື ກຸ່ມໂຮງສີເຂົ້າ) ຕ້ອງສະເໜີການປ່ຽນແປງຂອງລາຄາດັ່ງກ່າວ ເຖິງພາກລັດທີ່ກ່ຽວຂ້ອງຊາບ ເພື່ອຮັບຮອງ ແລະ ອະນຸມັດໃຫ້ຈຶ່ງສາມາດປະຕິບັດໄດ້;

7. ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງ ນຳໃຊ້ມາດຕະການຕໍ່ຜູ້ລະເມີດຝ່າຝືນຕາມທີ່ໄດ້ລະບຸ ໄວ້ໃນໝວດ 6 ຂອງດຳລັດ 474/ນຍ ແລະ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ ເມື່ອພົບເຫັນບຸກຄົນ ຫຼື ຫົວໜ່ວຍທຸລະກິດໃດທີ່ບໍ່ປະຕິບັດຕາມບົດແນະນຳສະບັບນີ້;

8. ໃຫ້ທຸກພາກສ່ວນເປັນເຈົ້າການ ພ້ອມກັນຈັດຕັ້ງປະຕິບັດຕາມພາລະບົດບາດຂອງໃຜລາວ ໃຫ້ໄດ້ຮັບ ຜົນດີ ແລ້ວລາຍງານຜົນການຈັດຕັ້ງປະຕິບັດໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າ ພາຍໃນ) ຫຼື ສາຍຕັ້ງຂອງຕົນຊາບໃນແຕ່ລະໄລຍະ ຕາມສະພາບທີ່ເໝາະສົມ;

9. ບົດແນະນຳສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ;

10. ທຸກຄຳສັ່ງ ແລະ ລະບຽບການ ທີ່ນຳໃຊ້ເມື່ອກ່ອນ ຫາກຂັດກັບບົດແນະນຳສະບັບນີ້ແມ່ນໃຫ້ຍົກເລີກ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ;

ດຣ. ນາມ ວິຍະເກດ

ສຳເນົາສົ່ງ:

1. ຄະນະນຳກະຊວງ ອຄ 03 ສະບັບ "ເພື່ອຊາບ"
2. ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ "ເພື່ອຊາບ ແລະ ຕິດຕາມ"
3. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ "ເພື່ອຊີ້ນຳການປະຕິບັດຂອງພາກທຸລະກິດ"